ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------ooo---------------

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ນະຄອນຫຼວງວຽງຈັນ, ວັນທີ 24 FEB 2015

# ມະຕິ

## ກອງປະຊຸມຄັ້ງທີ III ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມຄັ້ງທີ່ **III** ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ)ໄດ້ໄຂຂຶ້ນໃນວັນທີ 29 (ວັນຈັນ) ທັນວາ 2014 ທີ່ໂຮງແຮມ ລາວພລາຊາ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນທານຂອງ ພະນະທ່ານ ດຣ. ພັນຄໍາ ວິພາວັນ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດໂດຍມີບັນດາ ທ່ານສະມາຊິກຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ, ຄະນະປະສານງານຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມລວມທັງໝົດ 64 ທ່ານ (ຍິງ 15 ທ່ານ). ກອງປະຊຸມໄດ້ນຳສະເໜີເອກະສານຕ່າງໆ ດັ່ງນີ້: (1) ລາຍງານໂດຍຫຍໍ້ ຄວາມຄືບໜ້າການປັບປຸງຍຸດທະສາດ ການພັດທະນາຊັບພະຍາກອນມະນຸດໄລຍະ 10 ປີ (2016-2025); ແລະ ຮ່າງແຜນປະຕິບັດງານຂອບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະ 05ປີ (2016-2020); (2) ລາຍງານວຽກງານການພັດທະນາຊັບພະຍາກອນມະນຸດໂດຍການສະໜັບສະໜູນຂອງສະຖາບັນ ລາວ-ອິດສະຕາລີ ແລະ ຮ່າງແຜນປະຕິບັດງານການພັດທະນາຊັບພະຍາ ກອນມະນຸດຂອງບັນດາປະເທດເຂດລຸ່ມແມ່ນ້ຳຂອງ (GMS); (3) ລາຍງານການວິໄຈກ່ຽວກັບນັກສຶກສາທີ່ຮຽນຈົບຈາກຕ່າງປະເທດ ແລະ ວິຊາສະເພາະທີ່ມີຄວາມຕ້ອງການເພື່ອສົ່ງນັກສຶກສາໄປຮຽນຕ່າງປະເທດ; (4) ນຳສະເໜີປະຕິທິນການເຄື່ອນໄຫວຂອງຄະນະກຳມາທິການໃນການປະຕິບັດວຽກງານຕໍ່ໜ້າ.

ຜ່ານການຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນຢ່າງຕັ້ງໜ້າຜູ້ແທນກອງປະຊຸມໄດ້ມີຄວາມເປັນເອກະພາບຮັບຮອງເອົາບາງບັນຫາສຳຄັນເປັນມະຕິກອງປະຊຸມ ດັ່ງນີ້:

1. ເຫັນດີໂດຍພື້ນຖານຕໍ່ ບົດລາຍງານຄວາມຄືບໜ້າຂອງການປັບປຸງຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດໄລຍະ 10 ປີ (2016-2025) ມອບໃຫ້ກອງເລຂາ ຄຊພຊ ຮ່ວມກັບຄະນະປະສານງານ ສືບຕໍ່ຄົ້ນຄ້ວາ ແລະ ປັບປຸງທາງດ້ານເນື້ອໃນ ໃຫ້ຄົບຖ້ວນສົມບູນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ ແລ້ວລາຍງານໃຫ້ ຄຊພຊ ເປັນເອກະພາບແລ້ວ ສະເໜີຜ່ານກອງປະຊຸມລັດຖະບານ;
2. ກອງປະຊຸມເຫັນດີ ແລະ ຮັບຮອງເອົາໂດຍພື້ນຖານຕໍ່ຮ່າງແຜນປະຕິບັດງານຂອບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດໄລຍະ 05 ປີ (2016-2020); ທາງດ້ານການປັບປຸງເນື້ອໃນລະ ອຽດມອບໃຫ້ກອງເລຂາ ຄຊພຊ ຮ່ວມກັບຄະນະປະສານງານ ນຳໄປຄົ້ນຄ້ວາ ແລະ ປັບປຸງຕາມການປະ ກອບຄຳເຫັນຂອງຜູ້ແທນກອງປະຊຸມ ແລ້ວສົ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະຄະນະປະສານງານຂອງແຕ່ລະພາກສ່ວນໃຫ້ເອົາໃຈໃສ່ເປັນເຈົ້າການກວດຄືນ ແລະ ປະກອບຄຳເຫັນຕໍ່ບັນດາໜ້າວຽກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີເນື້ອໃນຄົບຖ້ວນຕາມກຳນົດເວລາ ແລ້ວສົ່ງໃຫ້ກອງເລຂາ/ຫ້ອງການພັດທະນາຊັບພະຍາກອນມະນຸດ ສັງລວມປັບປຸງ ແລ້ວລາຍງານໃຫ້ ຄຊພຊ ຊາບ ເປັນເອກະພາບແລ້ວ ສະເໜີຜ່ານກອງປະຊຸມລັດຖະບານ.
3. ເຫັນດີຮັບເອົາວຽກງານການພັດທະນາຊັບພະຍາກອນມະນຸດ ໂດຍການສະນັບສະໜູນຂອງສະຖາບັນ ລາວ-ອິດສະຕາລີ ແລະ ຮ່າງແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດຂອງບັນດາປະເທດໃນລຸ່ມແມ່ນ້ຳຂອງ (GMS); ມອບໃຫ້ຫ້ອງການພັດທະນາຊັບພະຍາກອນມະນຸດ ເປັນເຈົ້າການສືບຕໍ່ປະສານງານ ກັບພາກສ່ວນກ່ຽວຂ້ອງ ແລະ ເຮັດວຽກຮ່ວມກັບຄູ່ຮ່ວມພັດທະນາ ໃຫ້ໄດ້ຮັບໝາກຜົນ;
4. ເຫັນດີຮັບເອົາບົດລາຍງານການວິໄຈກ່ຽວກັບນັກສຶກສາທີ່ຮຽນຈົບຈາກຕ່າງປະເທດ ແລະ ວິຊາສະເພາະທີ່ມີຄວາມຕ້ອງເພື່ອສົ່ງນັກສຶກສາໄປຮຽນຕ່າງປະເທດ ມອບໃຫ້ກອງເລຂາ ຄຊພຊ ແລະ ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ຄົ້ນຄວ້າວິທີການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຄວາມຕ້ອງການໃນການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;
5. ສຳລັບແຜນກິດຈະກຳເຄື່ອນໄຫວຂອງ ຄຊພຊ 6 ເດືອນ ຕົ້ນປີ 2015 ໃຫ້ສຸມໃສ່ການກຳນົດແຜນຄວາມຕ້ອງການຊັບພະຍາກອນມະນຸດ ແຕ່ນີ້ຮອດປີ 2020, 2025 ຂອງແຕ່ລະຂະແໜງການ ແລ້ວກຳນົດແຜນສ້າງຊັບພະຍາກອນມະນຸດ ເປັນແຕ່ລະປີ ນັບແຕ່ປີ 2015-2016 ເປັນຕົ້ນໄປ.
6. ເຫັນດີໃຫ້ປະກອບ ອຸປະກອນ ແລະ ພາຫະນະຮັບໃຊ້ວຽກງານພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ຫ້ອງການພັດທະນາຊັບພະຍາກອນມະນຸດ ດ້ວຍທຶນຂອງລັດ, ຫຼື ການຊ່ວຍເຫຼືອຈາກອົງການ ຈັດຕັ້ງເອກະຊົນ ຫຼືຄູ່ຮ່ວມພັດທະນາ.

7. ກອງປະຊຸມຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ຄັ້ງທີ IV ຈະຈັດຂື້ນໃນລະຫວ່າງເດືອນ ພຶດສະພາ (5) 2015.
8. ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮ່ວມມືກັນຢ່າງຕັ້ງໜ້າ ດ້ວຍຄວາມເອົາໃຈໃສ່ ແລະ ຮັບຜິດຊອບສູງ ໃນການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃຫ້ໄປຕາມທິດທາງປະຕິຮູບການພັດທະນາຊັບພະ ຍາກອນມະນຸດ, ຕາມຄວາມຕ້ອງການຕົວຈິງຂອງການພັດທະນາເສດຖະກິດສັງຄົມ; ຄົ້ນຄ້ວາ, ພິຈາລະ ນາກ້າປ່ຽນແປງອັນເກົ່າທີ່ບໍ່ສອດຄ່ອງ, ສົ່ງເສີມ ແລະ ຜັນຂະຫຍາຍຈຸດດີທີ່ມີແລ້ວ ແລະ ຄົ້ນຄ້ວາສ້າງອັນໃໝ່ທີ່ສອດຄ່ອງກັບຍຸກສະໄໝ ໂດຍແນໃສ່ເອົາຜົນປະໂຫຍດຂອງປະເທດຊາດເປັນທີ່ຕັ້ງ.

ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ
ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ດຣ.ພັນຄຳ ວິພາວັນ